ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---===000===---

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 0031/25- /ມຫທຊ

ນະຄອນຫຼວງວຽງຈັນ, ວັນທີ: 19 ກຸມພາ 2025

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1/2025, ທີ່ຈັດຂຶ້ນໃນວັນທີ 18 ກຸມພາ 2025

- ອີງຕາມ ລະບຽບວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ສະບັບເລກທີ 04/ສຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມະຕິສຳຄັນຂອງກອງປະຊຸມສະພາບໍລິຫານ 1/2025, ທີ່ຈັດຂຶ້ນໃນວັນທີ 18 ກຸມພາ 2025 ເຊິ່ງມີວາລະຮັບຮອງເອົາມະຕິທີ່ສຳຄັນດັ່ງນີ້:

1. ຮັບຮອງບົດສະຫຼຸບລາຍງານການກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2024 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ;
2. ອະນຸມັດງົບສະແດງສະຖານະທາງການເງິນຂອງບໍລິສັດ(ງົບດຸນ ແລະ ງົບກຳໄລຂາດທຶນສຳເລັດ) ປະຈຳປີ 2024 ທີ່ຜ່ານການກວດສອບຈາກຜູ້ກວດສອບບັນຊີພາຍນອກແລ້ວເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ;
3. ອະນຸມັດງົດຈ່າຍຄ່າຕອບແທນລາຍປີ 2024 ສຳຫຼັບສະມາຊິກສະພາບໍລິຫານຂອງບໍລິສັດ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ;
4. ເຫັນດີການຈັດສັນກຳໄລສຸດທິປະຈຳປີ 2024 ຄັ້ງສຳຮອງຕາມລະບຽບການ ແລະ ງົດຈ່າຍເງິນປັນຜົນ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ;
5. ອະນຸມັດກູ້ຢືມເງິນຈາກ ທະນາຄານຮ່ວມພັດທະນາ (JDB)
6. ອະນຸມັດປັບແປງແຜນດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2025 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ;
7. ອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງສະມາຊິກສະພາບໍລິຫານຂອງບໍລິສັດ ສຳຫຼັບປີ 2025 ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາຮັບຮອງ;

8. ອະນຸມັດແຕ່ງຕັ້ງ PricewaterhouseCooper (Lao) Sole Company Limited ເປັນຜູ້ກວດສອບບັນຊີພາຍນອກ ສຳລັບປີ 2025 ແລະ ກຳນົດຄ່າຕອບແທນສຳລັບການກວດສອບ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນເພື່ອພິຈາລະນາອະນຸມັດ;
9. ອະນຸມັດຮຽກປະຊຸມຜູ້ຖືຮຸ້ນປະຈຳປີ 2024 , ວັນທີ 24 ເມສາ 2025 ເວລາ 09:30 ໂມງ, ທີ່ ໂຮງແຮມ ລາວພາຊ່າ, ຫ້ອງ May Hall ແລະ ມື້ປິດປຶ້ມບັນຊີທະບຽນຜູ້ຖືຄອງຮຸ້ນແມ່ນກຳນົດມື້ ວັນທີ 07 ມີນາ 2025 ເວລາ 17:00 ໂມງ ເພື່ອກຳນົດຜູ້ມີສິດເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ໂດຍມີວາລະປະຊຸມ ດັ່ງນີ້:
    1. ພິຈາລະນາຮັບຮອງບົດລາຍງານກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2023
    2. ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2024
    3. ພິຈາລະນາຮັບຮອງງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2024
    4. ພິຈາລະນາອະນຸມັດການຈັດສັນກຳໄລສຸດທິປະຈຳປີ 2024 ເປັນຄັງສຳຮອງຕາມລະບຽບການ ແລະ ງົດຈ່າຍເງິນປັນຜົນ
    5. ພິຈາລະນາອະນຸມັດງົດຈ່າຍຄ່າຕອບແທນລາຍປີ ສຳລັບປີ 2024 ສຳຫຼັບສະມາຊິກສະພາບໍລິຫານຂອງບໍລິສັດ
    6. ພິຈາລະນາອະນຸມັດແຜນການດຳເນີນການ, ເງິນເດືອນຂອງພະນັກງານ ແລະ ງົບລົງທຶນຂອງບໍລິສັດ ປະຈຳປີ 2025
    7. ພິຈາລະນາອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງສະມາຊິກສະພາບໍລິຫານຂອງບໍລິສັດສຳລັບປີ 2025
    8. ພິຈາລະນາອະນຸມັດແຕ່ງຕັ້ງຜູ້ກວດສອບພາຍນອກ ແລະ ກຳນົດຄ່າຕອບແທນສຳຫຼັບການກວດສອບບັນຊີປະຈຳປີ 2025
    9. ພິຈາລະນາເລື່ອງອື່ນ (ຖ້າມີຜູ້ສະເໜີເພີ່ມເຕີ່ມ)
10. ເຫັນດີໃຫ້ແຕ່ງຕັ້ງ ທ່ານ ທິລະພົງ ຢອງປະໂຄນ ແລະ ທ່ານນາງ ມະລິ ໄຊຍະວົງ ໃຫ້ເປັນຜູ້ຕ່າງໜ້າຂອງບໍລິສັດ ຊຶ່ງເປັນຜູ້ທີ່ມີຄວາມຮູ້ດ້ານກົດໝາຍ ເພື່ອປະກອບສ່ວນເຂົ້າເປັນຄະນະກຳມະການກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ ຕາມລະບຽບ ແລະ ກົດໝາຍທີ່ກຳນົດໄວ້ ສ່ວນການແຕ່ງຕັ້ງຕົວແທນຜູ້ຖືຮຸ້ນລາຍຍ່ອຍນັ້ນ ເຫັນດີມອບອຳນາດໃຫ້ປະທານສະພາບໍລິຫານ ແຕ່ງຕັ້ງໂດຍຄັດເລືອກເອົາຈາກຜູ້ຖືຮຸ້ນລາຍຍ່ອຍທີ່ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2024 ທັ້ງນີ້ຖ້າຫາກມີຄວາມຈຳເປັນຕ້ອງປ່ຽນແປງຜູ້ຕາງໜ້າຂອງບໍລິສັດ ມອບສິດໃຫ້ຜູ້ອານວຍການເປັນຜູ້ເລືອກຜູ້ທີ່ມີຄຸນສົມບັດເໝາະສົມແທນໄດ້.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ເອກະສານສະບັບນີ້ໃຊ້ຕາງລາຍງານ

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ

(ທ່ານ ມາມິ ຕຣີລິດວິໄລ)